ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR

ຂ່າວ NEWS

ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ສທຄ ສຳເລັດການຝຶກອົບຮົມໂປຣແກຣມບັນຊີ ການເງິນຈຸລະພາກ (MBWIN)



ສະຖາບັນການທະນາຄານ ໄດ້ສຳເລັດການຈັດຝຶກອົບຮົມວຽກງານການເງິນຈຸລະພາກໃນຫົວຂໍ້: “ໂປຣແກຣມບັນຊີການເງິນຈຸລະພາກ MBWIN” ໃຫ້ກັບພະນັກງານ, ຄູ-ອາຈານ ຈຳນວນ 23 ກວ່າຄົນ. ໃນໄລຍະວັນທີ 11-15 ສິງຫາ 2022 ຜ່ານມາ ທີ່ສະຖາບັນການທະນາຄານ ໂດຍໃຫ້ການກຽດ ແລະ ເປັນປະທານຮ່ວມຂອງທ່ານ ປອ. ອາຄົມ ປຣະເສີດ ຫົວໜ້າສະຖາບັນການທະນາຄານ ແລະ ທ່ານ ຄຳພັນ ຊະນະພັນ ຮອງຜູ້ອຳນວຍການສູນຝຶກອົບຮົມການເງິນຈຸລະພາກ (MFC).

ໃນພິທີ, ຄະນະຮັບຜິດຊອບໄດ້ຂຶ້ນກ່າວຈຸດປະສົງ ແລະ ລາຍງານຜົນການຝຶກອົບຮົມ ຊຶ່ງໄດ້ຍົກໃຫ້ເຫັນເນື້ອໃນ ສຳຄັນຂອງການຝຶກອົບຮົມໃນຄັ້ງນີ້ ໂດຍສະເພາະແມ່ນ ແນໃສ່ການຈັດຕັ້ງຜັນຂະຫຍາຍແນວທາງນະໂຍບາຍຂອງພັກ ແລະ ລັດຖະບານ, ກໍຄືວາລະແຫ່ງຊາດວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ, ການແກ້ໄຂ ແລະ ຫລຸດຜ່ອນຄວາມທຸກຍາກ ແລະ ການເຂົ້າເຖິງແຫລ່ງທຶນທີ່ມີປະສິດທິພາບຂອງປະຊາຊົນ ເວົ້າລວມ, ເວົ້າສະເພາະ ກໍຄືການຜັນຂະຫຍາຍແຜນງານຍຸດທະສາດ, ການສ້າງຄວາມເຂັ້ມແຂງທາງດ້ານວິຊາການໃຫ້ກັບພະນັກງານ, ຄູ-ອາຈານ ພ້ອມທັງເປັນການບຸກທະລຸທາງດ້ານຈິນຕະນາການໃໝ່ເຂົ້າໃນການຊຸກຍູ້ສົ່ງເສີມການສ້າງຊັບພະຍາກອນມະນຸດໃຫ້ມີຄວາມຮູ້-ຄວາມສາມາດທັງໃນດ້ານທິດສະດີ ກໍຄືວຽກງານຕົວຈິງໃຫ້ມີຄວາມເຂັ້ມແຂງ, ທັນສະໄໝເປັນກ້າວໆ. ນອກນັ້ນ ຍັງເປັນການຊຸກຍູ້ ພັດທະນາວຽກງານບໍລິການວິຊາການ ແລະ ການເງິນຈຸລະພາກຈຳລອງ (Simulation Microfinance) ໃຫ້ນັບມື້ເຂັ້ມແຂງ ແລະ ສາມາດຮັບຮອງການລົງຝຶກງານໃຫ້ກັບນັກສຶກສາ ແລະ ສັງຄົມ ໄດ້ດີຂຶ້ນ.





ໃນໂອກາດດັ່ງກ່າວທ່ານ ປອ. ອາຄົມ ປຣະເສີດ ໄດ້ໃຫ້ກຽດໂອ້ລົມເນັ້ນໜັກຕື່ມ ຕໍ່ພະນັກງານ, ຄູ-ອາຈານ ທີ່ເຂົ້າຮ່ວມຝຶກອົບຮົມໃນຄັ້ງນີ້ ໂດຍໄດ້ຍົກໃຫ້ເຫັນເຖິງບົດບາດຄວາມສຳຄັນ ແລະ ຄວາມຮຽກຮ້ອງຕ້ອງການຂອງການເຄື່ອນໄຫວໃນໜ້າທີ່ການເມືອງ ກໍຄືການເພີ່ມທະວີ, ຈັດຕັ້ງຜັນຂະຫຍາຍຕາມແນວທາງນະໂຍບາຍລວມ ໃຫ້ມີປະສິດທິຜົນສູງ, ຍົກສູງນຳເອົາບົດຮຽນໝູນໃຊ້ເຂົ້າໃນການຮຽນ-ການສອນໃຫ້ມີຄຸນນະພາບ ແລະ ຕອບສະໜອງໃຫ້ທັນກັບຄວາມຮຽກຮ້ອງຕ້ອງການຂອງວຽກງານ ເພື່ອການພັດທະນາຊັບພະຍາກອນມະນຸດແລະ ສັງຄົມໄດ້ແທ້ຈິງ. ນອກນັ້ນ ວຽກງານໂປຣແກຣມບັນຊີການເງິນຈຸລະພາກ ແມ່ນມີຄວາມຈຳເປັນທີ່ສຸດ ຈະຕ້ອງໄດ້ສືບຕໍ່ລົງເລິກຄົ້ນຄວ້າສ້າງຄວາມເຂົ້າໃຈບົດຮຽນ ຄຽງຄູ່ກັບການຄົ້ນຄວ້າບັນດານິຕິກຳ, ລະບຽບການສຳລັບການຄຸ້ມຄອງສະຖາບັນການເງິນຈຸລະພາກແລະ ວຽກງານການກວດສອບ-ກວດກາພາຍໃນສຳລັບສະຖາບັນການເງິນຈຸລະພາກ ເປັນຕົ້ນ. ການຈັດສຳມະນາ ແມ່ນໄດ້ຮັບການສະໜັບສະໜູນທາງດ້ານວິຊາການ (ຄູຝຶກ, ໂປຣແກຣມບັນຊີ MBWIN ແລະ ເອກະສານຄູ່ມືນຳໃຊ້) ຈາກສູນຝຶກອົບຮົມການເງິນຈຸລະພາກ (MFC) ແລະ ຄະນະວິທະຍາກອນ ທີ່ຊ່ຽວຊານມີບົດຮຽນປະສົບການມາບັນຍາຍ, ແລກປ່ຽນແລະ ຖ່າຍທອດຂໍ້ມູນຄວາມຮູ້ຕາມຂອບເຂດເນື້ອໃນແຕ່ລະຫົວຂໍ້ ດ້ວຍບັນຍາກາດທີ່ຟົດຟື້ນ, ກົງໄປກົງມາ ແລະ ດຳເນີນໄປຕາມວາລະທີ່ມີຜົນສຳເລັດຢ່າງຈົບງາມ.

**# ຂ່າວ: ສີລິມຸງຄຸນ ຫລວງລາດ**

**# ພາບ: ສະຖາບັນການທະນາຄານ**

## ໃຊ້ເງິນກີບທົ່ວທັງຊາດສ້າງບົດບາດຄ່າເງິນກີບລາວ